สาທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

*********************

ທະນາຄານແຫ່ງ ສປປ ລາວ ເລກທີ 811 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 18 OCT 2010

## ຂໍ້ຕົກລົງ
## ວ່າດ້ວຍມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ

- ອີງຕາມກົດໝາຍວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 275/ນຍ, ລົງວັນທີ 25 ກັນຍາ 2009;
- ອີງຕາມການຄົ້ນຄວ້າ ແລະ ສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນສະບັບເລກທີ 172/ກຄທສ, ລົງວັນທີ 02 ພະຈິກ 2009.

### ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດມາດຕະການ ຕໍ່ຜູ້ລະເມີດກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ລະບຽບການຕ່າງໆ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ ເພື່ອເປັນການສຶກສາອົບຮົມ ຍົກສູງສະຕິເຄົາລົບລະບຽບກົດໝາຍ, ຮັບປະກັນໃຫ້ທະນາຄານທຸລະກິດ ມີຄວາມເຕີບໃຫຍ່, ເຂັ້ມແຂງ, ປອດໄພ ແລະ ໝັ້ນຄົງ.

**ມາດຕາ 2. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ກັບທະນາຄານທຸລະກິດ, ຜູ້ຖືຮຸ້ນລາຍໃຫຍ່, ຜູ້ບໍລິຫານ ແລະ ພະນັກງານຂອງທະນາຄານທຸລະກິດ ທີ່ລະເມີດກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ

ລະບຽບການຕ່າງໆ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ.

ທະນາຄານທຸລະກິດ ໃນຂໍ້ຕົກລົງສະບັບນີ້ ແມ່ນລວມເຖິງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ.

## ມາດຕາ 3. ການລະເມີດ

ການລະເມີດໃນຂໍ້ຕົກລົງສະບັບນີ້ ລວມມີ:

1. ລະເມີດກ່ຽວກັບການສ້າງຕັ້ງ ແລະ ນໍາໃຊ້ໃບອະນຸຍາດ;
2. ລະເມີດຂໍ້ຫ້າມໃນການດໍາເນີນທຸລະກິດ (ຕາມມາດຕາ 43 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ);
3. ລະເມີດມາດຕະການຮັກສາຄວາມໝັ້ນຄົງ (ຕາມມາດຕາ 44 ຂອງກົດໝາຍວ່າ ດ້ວຍທະນາຄານທຸລະກິດ);
4. ລະເມີດກ່ຽວກັບການປະຕິບັດລະບອບລາຍງານ ໃຫ້ທະນາຄານ ແຫ່ງ ສປປ ລາວ (ຕາມມາດຕາ 65 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ)
5. ລະເມີດລະບຽບກ່ຽວກັບການນໍາໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນ;
6. ການບໍ່ໃຫ້ຄວາມຮ່ວມມື, ບໍ່ປະຕິບັດຕາມຄໍາແນະນໍາຂອງຜູ້ກວດກາຈາກທະນາຄານແຫ່ງ ສປປ ລາວ ຫຼື ຜູ້ກວດສອບພາຍນອກ;
7. ການບໍ່ປະຕິບັດຄໍາສັ່ງ, ບົດແນະນໍາ ຫຼື ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ.

## ມາດຕາ 4. ມາດຕະການຕໍ່ການລະເມີດ

ທະນາຄານທຸລະກິດ, ຜູ້ຖືຮຸ້ນລາຍໃຫຍ່, ຜູ້ບໍລິຫານ ແລະ ພະນັກງານຂອງທະນາຄານທຸລະກິດ ຫາກລະເມີດກົດໝາຍວ່າດ້ວຍທະນາຄານທຸລະກິດ ຫຼື ລະບຽບການຕ່າງໆ ທີ່ທະນາຄານ ແຫ່ງ ສປປ ລາວ ວາງອອກ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ກໍລະນີເປັນການລະເມີດທີ່ເບົາບາງຈະຖືກ:
   - ກ່າວເຕືອນເປັນລາຍລັກອັກສອນ;
   - ປັບໄໝບໍ່ເກີນ 1.000.000 ກີບ;
2. ກໍລະນີທີ່ໄດ້ປະຕິບັດມາດຕະການຕາມທີ່ກໍານົດໄວ້ໃນຂໍ້ 1 ຂອງມາດຕານີ້ແລ້ວ, ຍັງສືບຕໍ່ລະເມີດ ຫຼື ເປັນການລະເມີດທີ່ໜັກໜ່ວງຈະຖືກ:
   - ປັບໄໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ;
   - ໂຈະ ຫຼື ປົດຕໍາແໜ່ງຜູ້ບໍລິຫານ;

- ຈຳກັດການລະດົມທຶນ, ການປ່ອຍສິນເຊື່ອ ແລະ ອື່ນໆ ທີ່ທະນາຄານ ແຫ່ງ ສປປ ລາວ ເຫັນວ່າເປັນ;
- ຖອນໃບອະນຸຍາດສ້າງຕັ້ງ ແລະ ດຳເນີນການຊຳລະສະສາງ;
- ດຳເນີນຄະດີຕາມກົດໝາຍ.

**ມາດຕາ 5. ຮູບການກ່າວເຕືອນ ແລະ ປັບໄໝ**

1. ການກ່າວເຕືອນຕ້ອງເຮັດເປັນລາຍລັກອັກສອນ ປະກອບດ້ວຍເນື້ອໃນ ດັ່ງນີ້:
   - ຊື່ທະນາຄານທຸລະກິດທີ່ຖືກກ່າວເຕືອນ;
   - ເນື້ອໃນຂອງການລະເມີດ;
   - ກຳນົດເວລາປັບປຸງແກ້ໄຂ;
   - ມາດຕະການພາຍຫຼັງກ່າວເຕືອນຫາກສືບຕໍ່ລະເມີດ.
2. ການປັບໄໝຕ້ອງເຮັດເປັນລາຍລັກອັກສອນ ປະກອບດ້ວຍເນື້ອໃນ ດັ່ງນີ້:
   - ຊື່ທະນາຄານທະທຸລະກິດທີ່ຖືກປັບໄໝ;
   - ເນື້ອໃນຂອງການລະເມີດ;
   - ຈຳນວນຄັ້ງທີ່ລະເມີດ;
   - ຈຳນວນຄັ້ງທີ່ປັບໄໝ;
   - ຈຳນວນເງິນປັບໄໝ;
   - ກຳນົດເວລາປັບປຸງແກ້ໄຂ;
   - ມາດຕະການພາຍຫຼັງທີ່ຖືກປັບໄໝ ຫາກສືບຕໍ່ລະເມີດ.

**ມາດຕາ 6. ການລະເມີດການສ້າງຕັ້ງ ແລະ ນຳໃຊ້ໃບອະນຸຍາດ**

ທະນາຄານທຸລະກິດ ຈະຖືກຍຸບເລີກ ແລະ ຖອນໃບອະນຸຍາດ ຫາກກະທຳການໃດໜຶ່ງທີ່ເປັນການລະເມີດ ດັ່ງນີ້:

1. ໄດ້ຮັບອະນຸຍາດສ້າງຕັ້ງ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ຂໍ້ມູນທີ່ສະໜອງດັ່ງກ່າວ ມີຄວາມສຳຄັນຊຶ່ງຈະພາໃຫ້ທະນາຄານບໍ່ໝັ້ນຄົງ;
2. ບໍ່ດຳເນີນທຸລະກິດຂອງຕົນ ພາຍໃນກຳນົດ 90 ວັນ, ນັບແຕ່ມື້ທີ່ໄດ້ຮັບອະນຸຍາດສ້າງຕັ້ງເປັນຕົ້ນໄປ;
3. ການດຳເນີນງານຂອງທະນາຄານທຸລະກິດ ໃນໄລຍະ 3 ປີ ທຳອິດ ບໍ່ເປັນໄປຕາມແຜນທຸລະກິດທີ່ໄດ້ສະເໜີຂໍສ້າງຕັ້ງໂດຍບໍ່ມີເຫດຜົນພຽງພໍ.

ທະນາຄານທຸລະກິດ ຈະຖືກກ່າວເຕືອນ ຫຼື ປັບໄໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ ຫາກກະທຳການໃດໜຶ່ງທີ່ເປັນການລະເມີດ ດັ່ງນີ້:

1. ດຳເນີນທຸລະກິດບໍ່ຖືກຕອງຕາມການອະນຸຍາດ;
2. ມອບ, ໂອນ ຫຼື ໃຫ້ບຸກຄົນອື່ນນຳໃຊ້ໃບອະນຸຍາດຂອງຕົນ.

## ມາດຕາ 7. ການລະເມີດຂໍ້ຫ້າມໃນການດຳເນີນທຸລະກິດ

ທະນາຄານທຸລະກິດ ທີ່ລະເມີດຂໍ້ຫ້າມໃນການດຳເນີນທຸລະກິດ ຕາມທີ່ລະບຸໄວ້ຢູ່ໃນ ມາດຕາ 43 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ຈະຖືກປະຕິບັດມາດຕະການຕາມ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

## ມາດຕາ 8. ການລະເມີດມາດຕະການຮັກສາຄວາມໝັ້ນຄົງ

ທະນາຄານທຸລະກິດ ຫາກລະເມີດມາດຕະການຮັກສາຄວາມໝັ້ນຄົງ ຕາມທີ່ລະບຸໄວ້ຢູ່ໃນ ມາດຕາ 44 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ຈະຖືກປະຕິບັດມາດຕະການ ຕາມ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

## ມາດຕາ 9. ການລະເມີດລະບອບລາຍງານ

ທະນາຄານທຸລະກິດ ຫາກສົ່ງລາຍງານຊັກຊ້າ, ລາຍງານບໍ່ຖືກຕ້ອງ ຫຼື ບໍ່ປະຕິບັດຕາມ ລະບອບລາຍງານ ທີ່ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍວ່າດ້ວຍທະນາຄານທຸລະກິດ ແລະ ຕາມການກຳນົດຂອງທະນາຄານ ແຫ່ງ ສປປ ລາວ ໃນແຕ່ລະໄລຍະ ຈະຖືກປະຕິບັດມາດ ຕະການ ດັ່ງນີ້;

1. ກໍລະນີສົ່ງລາຍງານຊັກຊ້າ:
   - ຈະຖືກກ່າວເຕືອນເປັນລາຍລັກອັກສອນ;
   - ໃນກໍລະນີທີ່ກ່າວເຕືອນແລ້ວ ຍັງສືບຕໍ່ລະເມີດ ຈະຖືກປັບໄໝ 1.000.000 ກີບ ຕໍ່ອັນ.
2. ກໍລະນີສົ່ງລາຍງານບໍ່ຖືກຕ້ອງ
   - ກ່າວເຕືອນເປັນລາຍລັກອັກສອນ;
   - ໃນກໍລະນີທີ່ກ່າວເຕືອນແລ້ວ ຍັງສືບຕໍ່ລະເມີດ ຫຼື ເປັນການລະເມີດທີ່ໜັກໜ່ວງ ຈະຖືກ ປັບໄໝແຕ່ 1.000.000 ກີບ ຫາ 10.000.000 ກີບ;
   - ໂຈະ ຫຼື ປົດຕຳແໜ່ງຜູ້ບໍລິຫານ;
   - ຈຳກັດການລະດົມທຶນ, ການປ່ອຍສິນເຊື່ອ ຫຼື ມາດຕະການອື່ນໆ ທີ່ທະນາຄານແຫ່ງ

ສປປ ລາວ ເຫັນວ່າຈຳເປັນ;

- ຖອນໃບອະນຸຍາດສ້າງຕັ້ງ ແລະ ດຳເນີນການຊຳລະສະສາງ.

**ມາດຕາ 10. ການລະເມີດການນຳໃຊ້ທຶນຈົດທະບຽນ ແລະ ເງິນລົງທຶນ**

ທະນາຄານທຸລະກິດ ຫາກລະເມີດລະບຽບກ່ຽວກັບການນຳໃຊ້ທຶນຈົດທະບຽນ ຫຼື ເງິນລົງທຶນ ຈະຖືກປະຕິບັດມາດຕະການຕາມມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 11. ການບໍ່ໃຫ້ຄວາມຮ່ວມມື, ບໍ່ປະຕິບັດຕາມຄຳແນະນຳຂອງຜູ້ກວດກາ ຫຼື ຜູ້ກວດສອບ**

ທະນາຄານທຸລະກິດ ຫາກບໍ່ໃຫ້ຄວາມຮ່ວມມື, ບໍ່ປະຕິບັດຕາມຄຳແນະນຳ ຂອງຜູ້ກວດກາຈາກທະນາຄານ ແຫ່ງ ສປປ ລາວ ຫຼື ຜູ້ກວດສອບພາຍນອກ ຈະຖືກປະຕິບັດມາດຕະການຕາມມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 12. ການບໍ່ປະຕິບັດຄຳສັ່ງ, ບົດແນະນຳ ຫຼື ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ**

ທະນາຄານທຸລະກິດ ຫາກບໍ່ປະຕິບັດຕາມຄຳສັ່ງ, ບົດແນະນຳ ຫຼື ແຈ້ງການຕ່າງໆ ຂອງທະນາຄານ ແຫ່ງ ສປປ ລາວ ຈະຖືກປະຕິບັດມາດຕະການຕາມມາດຕາ 4 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 13. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ຈັດຕັ້ງປະຕິບັດ, ຕິດຕາມກວດກາ, ດຳເນີນການກ່າວເຕືອນ ແລະ ປັບໄໝ ທະນາຄານທຸລະກິດທີ່ລະເມີດຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 14. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃຊ້ປ່ຽນແທນຂໍ້ກຳນົດວ່າດ້ວຍການປ້ອງກັນຄວາມໝັ້ນຄົງ ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 04/ທຫລ, ລົງວັນທີ 15/01/1996.

ບັນດາຂໍ້ກຳນົດ ແລະ ແຈ້ງການຕ່າງໆ ທີ່ໄດ້ປະກາດໃຊ້ໃນເມື່ອກ່ອນຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ

ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ.ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ : 4304 BNL. VTE. LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110
E-mail : Bol@pan-laos.net.la